ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 289/ປປທ

ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍສັນຊາດລາວ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 061/ສພຊ, ລົງວັນທີ 01 ພະຈິກ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍສັນຊາດລາວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 025/ຄປຈ, ລົງວັນທີ 28 ພະຈິກ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍສັນຊາດລາວ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 061 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 01/11/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນບ່າຍຂອງ ວັນທີ 1 ພະຈິກ 2017.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 29 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 1 ພະຈິກ 2017

# ກົດໝາຍ
# ວ່າດ້ວຍສັນຊາດລາວ
# (ສະບັບປັບປຸງ)

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາການ ໃຫ້ສັນຊາດ, ຖອນສັນຊາດຄືນ, ໃຫ້ປະສັນຊາດ ແລະ ໃຫ້ສັນຊາດລາວຄືນ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແນໃສ່ຍົກສູງກຽດສັກສີ ແລະ ຄວາມຮັບຜິດຊອບຂອງພົນລະເມືອງລາວຕໍ່ປະເທດຊາດ, ເສີມຂະຫຍາຍມູນເຊື້ອຄວາມສາມັກຄີ, ນ້ຳໃຈຮັກຊາດຂອງພົນລະເມືອງລາວ ເພີ່ມທະວີສາຍກ່ຽວພັນສະໜິດແໜ້ນລະຫວ່າງ ລັດ ສປປ ລາວ ກັບພົນລະເມືອງລາວ.

**ມາດຕາ 2 (ປັບປຸງ) ສັນຊາດລາວ**

ສັນຊາດລາວ ແມ່ນ ສາຍກ່ຽວພັນຢ່າງສະໜິດແໜ້ນ ທາງດ້ານການເມືອງ ແລະ ກົດໝາຍ ລະຫວ່າງບຸກຄົນ ກັບ ລັດ ສປປ ລາວ ຊຶ່ງສະແດງອອກເຖິງ ສິດ ແລະ ພັນທະຂອງພົນລະເມືອງລາວ ທີ່ມີຕໍ່ ລັດ ສປປ ລາວ, ສິດ ແລະ ຄວາມຮັບຜິດຊອບຂອງລັດ ສປປ ລາວ ທີ່ມີຕໍ່ພົນລະເມືອງລາວ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

ຜູ້ທີ່ມີສັນຊາດລາວ ຖືວ່າແມ່ນພົນລະເມືອງລາວ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການໃຫ້ສັນຊາດລາວ** ໝາຍເຖິງ ການຕົກລົງໃຫ້ສັນຊາດລາວ ແກ່ພົນລະເມືອງຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້;
2. **ການໃຫ້ສັນຊາດລາວຄືນ** ໝາຍເຖິງ ການຕົກລົງໃຫ້ສັນຊາດລາວຄືນ ແກ່ຜູ້ທີ່ມີເຊື້ອຊາດລາວ ສັນຊາດຕ່າງປະເທດ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍສະບັບນີ້;

3. **ການຖອນສັນຊາດລາວຄືນ** ໝາຍເຖິງ ການຕົກລົງໃຫ້ຖອນສັນຊາດລາວຄືນ ແກ່ບຸກຄົນທີ່ໄດ້ສັນຊາດລາວແລ້ວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້;

4. **ການປະສັນຊາດລາວ** ໝາຍເຖິງ ການຕົກລົງໃຫ້ພົນລະເມືອງລາວ ປະສັນຊາດລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້;

5. **ຜູ້ທີ່ມີເຊື້ອຊາດລາວ** ໝາຍເຖິງ ຜູ້ທີ່ເກີດຈາກ ພໍ່ ແລະ ແມ່ ຫຼື ພໍ່ ຫຼື ແມ່ ເປັນພົນລະເມືອງລາວ;

6. **ການຂາດສາຍພົວພັນທາງດ້ານກົດໝາຍກັບລັດ ສປປ ລາວ** ໝາຍເຖິງ ການທີ່ບຸກຄົນໃດໜຶ່ງໄປຢູ່ຕ່າງປະເທດໂດຍຂາດການຕິດຕໍ່ພົວພັນ ແລະ ບໍ່ໄດ້ປະຕິບັດສິດ ແລະ ພັນທະຂອງພົນລະເມືອງລາວທີ່ມີຕໍ່ລັດ ສປປ ລາວ ຜ່ານສະຖານເອກອັກຄະລັດຖະທູດລາວ ຫຼື ສະຖານກົງສຸນໃຫຍ່ຂອງ ສປປ ລາວ ຢູ່ຕ່າງປະເທດ;

7. **ພົນລະເມືອງຕ່າງປະເທດ** ໝາຍເຖິງ ຄົນຕ່າງປະເທດ ແລະ ຄົນຕ່າງດ້າວ;

8. **ຄົນຕ່າງປະເທດ** ໝາຍເຖິງ ບຸກຄົນທີ່ມີສັນຊາດອື່ນ ຊຶ່ງເຂົ້າມາ ສປປ ລາວ ຊົ່ວຄາວ ຫຼື ຍາວນານ ເພື່ອປະຕິບັດໜ້າທີ່ໃດໜຶ່ງ, ເມື່ອໝົດກຳນົດແລ້ວກໍກັບຄືນ. ບຸກຄົນເຫຼົ່ານີ້ ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງການຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

9. **ຄົນຕ່າງດ້າວ** ໝາຍເຖິງ ບຸກຄົນທີ່ມີສັນຊາດອື່ນແຕ່ເຂົ້າມາຕັ້ງຖິ່ນຖານ, ອາໄສຢູ່ໃນ ສປປ ລາວ ຍາວນານ, ຖືບັດຕ່າງດ້າວ ແລະ ລັດຖະບານຂອງຄົນຕ່າງດ້າວນັ້ນ ກໍຍັງຮັບຮູ້ຢ່າງເປັນທາງການຢູ່;

10. **ຄົນບໍ່ມີສັນຊາດ** ໝາຍເຖິງ ບຸກຄົນທີ່ອາໄສຢູ່ໃນດິນແດນຂອງ ສປປ ລາວ ຊຶ່ງບໍ່ແມ່ນພົນລະເມືອງລາວ ແລະ ບໍ່ສາມາດຢັ້ງຢືນວ່າ ຕົນມີສັນຊາດໃດ;

11. **ພົນລະເມືອງກິດຕິມະສັກ** ໝາຍເຖິງ ຄົນຕ່າງປະເທດ ຊຶ່ງລັດຖະບານຕົກລົງໃຫ້ນາມມະຍົດດັ່ງກ່າວ.

**ມາດຕາ 4 (ໃໝ່) ນະໂຍບາຍຂອງລັດກ່ຽວກັບວຽກງານສັນຊາດ**

ລັດອະນຸຍາດໃຫ້ ພົນລະເມືອງຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນເຊື້ອຊາດລາວ ທີ່ມີເງື່ອນໄຂມາດຕະຖານຄົບຖ້ວນຕາມກົດໝາຍສະບັບນີ້ ໄດ້ຮັບສັນຊາດລາວ.

ລັດໃຫ້ບູລິມະສິດແກ່ພົນລະເມືອງຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນເຊື້ອຊາດລາວ ທີ່ມີຄຸນງາມຄວາມດີພົ້ນເດັ່ນຕໍ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໄດ້ຮັບສັນຊາດລາວ.

**ມາດຕາ 5 (ໃໝ່) ຫຼັກການກ່ຽວກັບວຽກງານສັນຊາດ**

ວຽກງານສັນຊາດ ໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

2. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດລາວ;

3. ຮັບປະກັນການຮັກສາຄວາມລັບຂອງຊາດ, ຄວາມລັບທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

4. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງຕ່າງປະເທດ ແລະ ຄົນບໍ່ມີສັນຊາດຕາມກົດໝາຍ;

5. ຮັບປະກັນຄວາມເປັນເອກະພາບ, ວ່ອງໄວ, ໂປ່ງໃສ, ສະດວກ, ຖືກຕ້ອງ ແລະ ຍຸຕິທຳ.

**ມາດຕາ 6 ການໃຫ້ມີສັນຊາດດຽວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ອະນຸຍາດໃຫ້ພົນລະເມືອງລາວມີຫຼາຍສັນຊາດຄວບກັນ.

**ມາດຕາ 7 ການຮັກສາສັນຊາດລາວ**

ການແຕ່ງດອງ, ການຢ່າຮ້າງຂອງພົນລະເມືອງລາວ ກັບບຸກຄົນທີ່ມີສັນຊາດອື່ນ ຫຼື ກັບບຸກຄົນທີ່ບໍ່ມີສັນຊາດນັ້ນ ຈະບໍ່ພາໃຫ້ມີການປ່ຽນແປງສັນຊາດລາວ.

ການໄດ້ ຫຼື ການເສຍສັນຊາດລາວຂອງຜົວ ຫຼື ເມຍ ຈະບໍ່ພາໃຫ້ສັນຊາດຂອງອີກຝ່າຍໜຶ່ງມີການປ່ຽນແປງ.

**ມາດຕາ 8 ການປົກປ້ອງພົນລະເມືອງ ລາວທີ່ຢູ່ຕ່າງປະເທດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄຸ້ມຄອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງລາວ ທີ່ອາໄສຢູ່ຕ່າງປະເທດ.

**ມາດຕາ 9 ການບໍ່ມອບໂອນພົນລະເມືອງລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະບໍ່ມອບໂອນພົນລະເມືອງລາວ ໃຫ້ແກ່ລັດຕ່າງປະເທດ.

**ມາດຕາ 10 ສິດໃນການຂໍເອົາສັນຊາດອື່ນ**

ພົນລະເມືອງລາວ ມີສິດຂໍເອົາສັນຊາດອື່ນ ແຕ່ຕ້ອງໄດ້ປະສັນຊາດລາວເສຍກ່ອນ. ການປະສັນຊາດລາວໃຫ້ປະຕິບັດ ຕາມມາດຕາ 23 ຂອງກົດໝາຍສະບັບນີ້.

**ມາດຕາ 11 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບພົນລະເມືອງລາວ, ຄົນເຊື້ອຊາດລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດຢູ່ພາຍໃນ ສປປ ລາວ ແລະ ພົນລະເມືອງລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ.

**ມາດຕາ 12 (ໃໝ່) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສັນຊາດດ້ວຍການແລກປ່ຽນບົດຮຽນ, ປະສົບການ, ຂໍ້ມູນ ຂ່າວສານ, ການຍົກລະດັບວິຊາສະເພາະ, ຄວາມຮູ້, ຄວາມສາມາດ ໃຫ້ແກ່ບຸກຄະລາກອນ ໂດຍສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ການໄດ້ສັນຊາດລາວ

**ມາດຕາ 13 ພື້ນຖານການໄດ້ສັນຊາດລາວ**

ສັນຊາດລາວໄດ້ມາຈາກ:

1. ການເກີດ;
2. ການຮັບເຂົ້າສັນຊາດລາວ;
3. ການໄດ້ສັນຊາດລາວຄືນ;
4. ພື້ນຖານອື່ນທີ່ໄດ້ກຳນົດໄວ້ໃນມາດຕາ 14 ຫາ ມາດຕາ 19 ຂອງກົດໝາຍສະບັບນີ້.

**ມາດຕາ 14** (ປັບປຸງ) **ສັນຊາດຂອງເດັກ ຊຶ່ງພໍ່ ແລະ ແມ່ ເປັນພົນລະເມືອງລາວ**

ເດັກ ຊຶ່ງໃນເວລາເກີດນັ້ນ ພໍ່ ແລະ ແມ່ ເປັນພົນລະເມືອງລາວ ກໍຖືວ່າເປັນສັນຊາດລາວ ໂດຍບໍ່ຂຶ້ນກັບວ່າເດັກນັ້ນເກີດຢູ່ໃນ ຫຼື ນອກດິນແດນຂອງ ສປປ ລາວ.

**ມາດຕາ 15** (ປັບປຸງ) **ສັນຊາດຂອງເດັກ ຊຶ່ງພໍ່ ຫຼື ແມ່ ເປັນພົນລະເມືອງລາວ**

ໃນເມື່ອ ພໍ່ ຫຼື ແມ່ຂອງເດັກ ເປັນພົນລະເມືອງລາວ ໃນເວລາເດັກເກີດ ຈະຖືວ່າເດັກຜູ້ນັ້ນ ເປັນສັນຊາດລາວ ຖ້າຫາກວ່າ:

1. ເດັກຜູ້ນັ້ນ ໄດ້ເກີດຢູ່ໃນດິນແດນຂອງ ສປປ ລາວ;
2. ເດັກຜູ້ນັ້ນ ໄດ້ເກີດຢູ່ນອກດິນແດນຂອງ ສປປ ລາວ ໃນເວລານັ້ນ ທັງພໍ່ ແລະ ແມ່ ຫຼື ພໍ່ ຫຼື ແມ່ ຜູ້ໃດຜູ້ໜຶ່ງ ມີທີ່ຢູ່ຖາວອນໃນດິນແດນຂອງ ສປປ ລາວ.

ໃນກໍລະນີ ທີ່ເດັກຜູ້ນັ້ນ ໄດ້ເກີດຢູ່ນອກດິນແດນຂອງ ສປປ ລາວ, ທັງພໍ່ ແລະ ແມ່ ມີທີ່ຢູ່ຖາວອນຢູ່ນອກດິນແດນຂອງ ສປປ ລາວ ສັນຊາດຂອງເດັກ ໃຫ້ຖືເອົາຕາມຄຳເຫັນດີຂອງພໍ່ ແລະ ແມ່.

ໃນກໍລະນີ ທີ່ພໍ່ ຫຼື ແມ່ ຂອງເດັກເປັນພົນລະເມືອງລາວ ແລະ ອີກຜູ້ໜຶ່ງ ເປັນຄົນບໍ່ມີສັນຊາດ ເດັກທີ່ເກີດມານັ້ນ ຖືວ່າເປັນສັນຊາດລາວ ໂດຍບໍ່ຂຶ້ນກັບບ່ອນເກີດ.

**ມາດຕາ 16 ສັນຊາດຂອງເດັກ ຊຶ່ງພໍ່ ແລະ ແມ່ ເປັນຄົນບໍ່ມີສັນຊາດ**

ເດັກທີ່ໄດ້ເກີດຢູ່ໃນດິນແດນຂອງ ສປປ ລາວ ຊຶ່ງພໍ່ ແລະ ແມ່ ເປັນຄົນບໍ່ມີສັນຊາດ, ມີທີ່ຢູ່ຖາວອນໃນ ສປປ ລາວ, ໄດ້ເຊື່ອມເຂົ້າສັງຄົມ ແລະ ວັດທະນະທຳລາວແລ້ວ ກໍຈະໄດ້ສັນຊາດລາວ ຕາມການຮ້ອງຂໍຂອງພໍ່ແມ່.

**ມາດຕາ 17** (ປັບປຸງ) **ສັນຊາດຂອງເດັກທີ່ບໍ່ຮູ້ວ່າຜູ້ໃດເປັນພໍ່ ແລະ ແມ່**

ເດັກທີ່ໄດ້ພົບເຫັນຢູ່ໃນດິນແດນຂອງ ສປປ ລາວ ແລະ ບໍ່ຮູ້ວ່າ ຜູ້ໃດເປັນພໍ່ ແລະ ແມ່ ນັ້ນ ກໍຈະຖືວ່າເດັກຜູ້ນັ້ນ ເປັນສັນຊາດລາວ.

ຖ້າວ່າເດັກທີ່ພົບເຫັນນັ້ນຍັງບໍ່ທັນເຖິງອາຍຸ ສິບແປດປີ ຫາກມີຫຼັກຖານວ່າພໍ່ ແລະ ແມ່ຂອງເດັກເປັນພົນລະເມືອງຕ່າງປະເທດ ກໍຈະຖືວ່າເດັກຜູ້ນັ້ນເປັນຄົນສັນຊາດຕ່າງປະເທດ ນັບແຕ່ວັນເກີດເປັນຕົ້ນໄປ.

**ມາດຕາ 18 (ປັບປຸງ) ເງື່ອນໄຂການໄດ້ສັນຊາດລາວຂອງພົນລະເມືອງຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ**

ພົນລະເມືອງຕ່າງປະເທດ, ຄົນບໍ່ມີສັນຊາດ ອາດໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງຜູ້ກ່ຽວຖ້າຫາກ ວ່າມີເງື່ອນໄຂຄົບຖ້ວນ, ຖືກຕ້ອງ ດັ່ງນີ້:

1. ມີອາຍຸແຕ່ ສິບແປດປີ ຂຶ້ນໄປ ໃນເວລາເຮັດຄຳຮ້ອງຂໍເອົາສັນຊາດລາວ;
2. ເຄົາລົບ ລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ;
3. ຮູ້ເວົ້າ, ອ່ານ ແລະ ຂຽນພາສາລາວໄດ້ໃນລະດັບທີ່ແນ່ນອນ;
4. ໄດ້ເຊື່ອມເຂົ້າສັງຄົມ ແລະ ວັດທະນະທຳລາວ, ຕ້ອງຮູ້ ແລະ ເຄົາລົບຮີດຄອງປະເພນີອັນດີງາມຂອງຊາດລາວ;
5. ມີສຸຂະພາບດີ, ບໍ່ເປັນພະຍາດຕິດແປດທີ່ຮ້າຍແຮງ, ບໍ່ຕິດສິ່ງເສບຕິດ;
6. ບໍ່ໄດ້ຖືກສານຕັດສິນລົງໂທດຕັດອິດສະລະພາບ ຫຼື ຖືກສານລົງໂທດຕັດອິດສະລະພາບຍ້ອນການກະທຳຜິດ ໂດຍບໍ່ເຈດຕະນາ;
7. ໄດ້ປະສັນຊາດເດີມຂອງຕົນ ຍົກເວັ້ນຄົນບໍ່ມີສັນຊາດ;
8. ໄດ້ປະກອບສ່ວນໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;
9. ບໍ່ໄດ້ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງຊາດ;
10. ມີວິຊາສະເພາະ, ວິຊາຊີບໃດໜຶ່ງທີ່ແນ່ນອນ, ມີຖານະດ້ານເສດຖະກິດທີ່ໝັ້ນຄົງ;
11. ຕ້ອງໄດ້ຢູ່ ສປປ ລາວ ຢ່າງຕໍ່ເນື່ອງ ແຕ່ ສິບປີ ຂຶ້ນໄປ ກ່ອນເວລາຍື່ນຄຳຮ້ອງຂໍເອົາສັນຊາດລາວ.

ສຳລັບຜູ້ທີ່ມີຄຸນງາມຄວາມດີ, ໄດ້ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ກູ້ຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ ແລະ ຜູ້ມີຄວາມຮູ້, ຄວາມສາມາດດ້ານວິຊາສະເພາະຂັ້ນຊ່ຽວຊານ, ມີພອນສະຫວັນພິເສດ, ປະສົບຜົນສຳເລັດທາງດ້ານທຸລະກິດ ທີ່ພັກ ແລະ ລັດມີຄວາມຕ້ອງການ, ຕ້ອງມີກຳນົດເວລາຢູ່ ສປປ ລາວ ຕໍ່ເນື່ອງຢ່າງໜ້ອຍ ແຕ່ ສາມປີ ຂຶ້ນໄປ.

ສຳລັບຄົນຕ່າງປະເທດທີ່ມີຄຸນງາມຄວາມດີພົ້ນເດັ່ນ ຕໍ່ການພັດທະນາເສດຖະກິດ-ສັງຄົມ, ມີຄວາມສະໝັກໃຈ, ຍິນດີເຄົາລົບລັດຖະທຳມະນູນ ແລະ ກົດໝາຍ ຂອງ ສປປ ລາວ ແຕ່ບໍ່ສາມາດປະສັນຊາດເດີມຂອງຕົນໄດ້ ອາດຈະຖືກຮັບເປັນພົນລະເມືອງກິດຕິມະສັກຂອງ ສປປ ລາວ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 19 ການຮັບຜູ້ທີ່ມີເຊື້ອຊາດລາວເຂົ້າສັນຊາດລາວ**

ຜູ້ທີ່ມີເຊື້ອຊາດລາວ ອາດໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງຜູ້ກ່ຽວ ຕາມເງື່ອນໄຂທີ່ໄດ້ກຳ ນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້, ສ່ວນກຳນົດເວລາຢູ່ ສປປ ລາວ ຢ່າງຕໍ່ເນື່ອງແຕ່ ຫ້າປີ ຂຶ້ນໄປ ສຳລັບຜູ້ທີ່ໄດ້ສັນຊາດອື່ນແລ້ວ ແລະ ສາມປີ ຂຶ້ນໄປ ສຳລັບຜູ້ທີ່ບໍ່ໄດ້ສັນຊາດອື່ນ.

**ມາດຕາ 20 (ໃໝ່) ເອກະສານປະກອບຄຳຮ້ອງຂໍເອົາສັນຊາດລາວສຳລັບພົນລະເມືອງຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນທີ່ມີເຊື້ອຊາດລາວ**

ເອກະສານປະກອບຄຳຮ້ອງຂໍເອົາສັນຊາດລາວ ຂອງພົນລະເມືອງຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນທີ່ມີເຊື້ອຊາດລາວ ມີ ດັ່ງນີ້:

1. ຄຳຮ້ອງຂໍເອົາສັນຊາດລາວ;
2. ສຳເນົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ;

3. ໃບຢັ້ງຢືນທີ່ຢູ່ປັດຈຸບັນ;
4. ສຳເນົາສຳມະໂນຄົວ;
5. ຊີວະປະຫວັດທີ່ຈະແຈ້ງ ແລະ ຖືກຕ້ອງ;
6. ໃບຢັ້ງຢືນການເກີດຂອງຜູ້ຮ້ອງຂໍ ແລະ ຂອງລູກທີ່ບໍ່ທັນພົ້ນກະສຽນອາຍຸ ສິບແປດ ປີ;
7. ໃບຢັ້ງຢືນຄຳເຫັນດີຂອງລູກທີ່ມີອາຍຸແຕ່ ແປດປີ ຂຶ້ນໄປ;
8. ໃບຢັ້ງຢືນການແຕ່ງດອງ;
9. ປະກາສະນີຍະບັດ ຫຼື ໃບຢັ້ງຢືນການສຶກສາ ຫຼື ໃບກວດສອບດ້ານພາສາລາວ;
10. ໃບແຈ້ງໂທດ;
11. ໃບຢັ້ງຢືນການເຊື່ອມເຂົ້າສັງຄົມ ແລະ ວັດທະນະທຳລາວ;
12. ໃບຢັ້ງຢືນສຸຂະພາບ;
13. ໃບຢັ້ງຢືນການປະລະສັນຊາດເດີມຂອງຜູ້ຮ້ອງຂໍ (ຍົກເວັ້ນຄົນບໍ່ມີສັນຊາດ);
14. ໃບຢັ້ງຢືນການດຳລົງຊີວິດຢູ່ລາວ;
15. ໃບຢັ້ງຢືນການມີວຽກເຮັດງານທຳ;
16. ໃບຢັ້ງຢືນຖານະທາງດ້ານເສດຖະກິດ;
17. ໃບຢັ້ງຢືນການປະຕິບັດພັນທະຕ່າງໆຕາມກົດໝາຍ;
18. ໃບຢັ້ງຢືນການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;
19. ໃບຢັ້ງຢືນການຮັບປະກັນ;
20. ເອກະສານຢັ້ງຢືນການເສຍຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບສັນຊາດລາວ;
21. ຮູບຖ່າຍຂະໜາດ 3 x 4 ຈຳນວນ 3 ແຜ່ນ (ຮູບຖ່າຍບໍ່ເກີນ ສາມ ເດືອນ).

ທຸກເອກະສານຕ້ອງເຮັດເປັນພາສາລາວ, ຖ້າເອກະສານໃດຫາກເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ແລະ ເອກະສານສະບັບສຳເນົາ ຕ້ອງມີການຢັ້ງຢືນຄວາມຖືກຕ້ອງ ຕາມສະບັບເດີມຈາກອົງການທະບຽນສານ.

ຄຳຮ້ອງຂໍເອົາສັນຊາດລາວ ແລະ ເອກະສານປະກອບ ສາມາດພິວພັນເອົາຢູ່ຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ ຫຼື ພະແນກຍຸຕິທຳແຂວງ, ນະຄອນຫຼວງ ຫຼື ກະຊວງຍຸຕິທຳ.

**ມາດຕາ 21 (ປັບປຸງ) ການຍື່ນ ແລະ ພິຈາລະນາຄຳຮ້ອງກ່ຽວກັບສັນຊາດ**

ຜູ້ທີ່ມີຈຸດປະສົງຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ ຕ້ອງຍື່ນສຳນວນຄຳຮ້ອງຕາມຂັ້ນ ດັ່ງນີ້:

1. ຂັ້ນບ້ານ: ແມ່ນອົງການປົກຄອງບ້ານເປັນຜູ້ຄົ້ນຄວ້າ ແລະ ພິຈາລະນາພາຍໃນເວລາ ສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ;

2. ຂັ້ນເມືອງ: ແມ່ນອົງການປົກຄອງຂັ້ນເມືອງເປັນຜູ້ຄຸ້ມຄອງລວມສູນເປັນເອກະພາບ ໂດຍມອບໃຫ້ຫ້ອງການຍຸຕິທຳ ເມືອງ, ເທດສະບານ, ນະຄອນ ເປັນເຈົ້າການໃນການປະສານສົມທົບກັບ ກອງບັນຊາການປ້ອງກັນຄວາມສະຫງົບ ແລະ ຫ້ອງການພາຍໃນຂັ້ນເມືອງ ເພື່ອຄົ້ນຄວ້າ ແລະ ພິຈາລະນາ ພາຍໃນເວລາ ຊາວວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ;

3. ຂັ້ນແຂວງ: ແມ່ນອົງການປົກຄອງແຂວງ, ນະຄອນຫຼວງ ເປັນຜູ້ຄຸ້ມຄອງລວມສູນເປັນເອກະພາບ ໂດຍມອບໃຫ້ພະແນກຍຸຕິທຳແຂວງ, ນະຄອນຫຼວງ ເປັນເຈົ້າການໃນການປະສານສົມທົບກັບກອງບັນຊາ

ການປ້ອງກັນຄວາມສະຫງົບ ແລະ ພະແນກພາຍໃນຂັ້ນແຂວງ ເພື່ອຄົ້ນຄວ້າ ແລະ ພິຈາລະນາ ພາຍໃນເວລາ ຊາວວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ;

4. ກະຊວງຍຸຕິທຳ ເປັນເຈົ້າການປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ ແລະ ກະຊວງພາຍໃນ ເພື່ອກວດກາຄວາມຖືກຕ້ອງ, ຄົບຖ້ວນຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 18, 19 ແລະ 23 ຂອງກົດໝາຍສະບັບນີ້ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ພາຍຫຼັງໄດ້ຮັບຄຳຮ້ອງແລ້ວ ກະຊວງຍຸຕິທຳ ຕ້ອງກວດກາເບິ່ງຄຳຮ້ອງດັ່ງກ່າວ, ຖ້າຫາກເຫັນວ່າ ມີບັນຫາໃດໜຶ່ງຍັງບໍ່ຈະແຈ້ງ ກໍມີສິດສອບຖາມຄືນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ. ເມື່ອເຫັນວ່າ ຖືກຕ້ອງ, ຄົບຖ້ວນແລ້ວ ກະຊວງຍຸຕິທຳ ຕ້ອງແຕ່ງຕັ້ງຄະນະກຳມະການສຳພາດຜູ້ຮ້ອງຂໍເອົາສັນຊາດ ກ່ອນນຳສະເໜີຕໍ່ລັດຖະບານ.

ສຳລັບຄົນລາວທີ່ອາໄສຢູ່ຕ່າງປະເທດ ຊຶ່ງມີຈຸດປະສົງຂໍປະສັນຊາດລາວ ສາມາດພິວພັນເອົາຄຳຮ້ອງແລ້ວຍື່ນຕໍ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ຂອງ ສປປ ລາວ ປະຈຳປະເທດນັ້ນ ເພື່ອກວດກາຄວາມຖືກຕ້ອງ, ຄົບຖ້ວນ ພາຍໃນເວລາ ສິບຫ້າວັນ, ຈາກນັ້ນ ກໍສະເໜີຕໍ່ກະຊວງຍຸຕິທຳ ໂດຍຜ່ານກະຊວງການຕ່າງປະເທດ ເພື່ອພິຈາລະນາ ກ່ອນນຳສະເໜີຕໍ່ລັດຖະບານ. ໃນກໍລະນີ ທີ່ບໍ່ມີສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ຂອງ ສປປ ລາວ ປະຈຳປະເທດນັ້ນ ໃຫ້ຍື່ນຄຳຮ້ອງຜ່ານກະຊວງການຕ່າງປະເທດ ຂອງ ສປປ ລາວ.

## ໝວດທີ 3
## ການເສຍສັນຊາດລາວ ແລະ ການໄດ້ສັນຊາດລາວຄືນ

### ມາດຕາ 22 ສາເຫດທີ່ພາໃຫ້ ເສຍສັນຊາດລາວ

ສັນຊາດລາວຈະເສຍໄປໃນກໍລະນີ:

1. ປະສັນຊາດລາວ;
2. ຖືກຖອນສັນຊາດລາວຄືນ;
3. ໄປຢູ່ຕ່າງປະເທດ.

ການເສຍສັນຊາດລາວ ຈະບໍ່ພາໃຫ້ສັນຊາດຂອງຜົວ ຫຼື ເມຍ ແລະ ລູກ ມີການປ່ຽນແປງ.

### ມາດຕາ 23 (ປັບປຸງ) ການປະສັນຊາດລາວ

ພົນລະເມືອງລາວ ອາດປະສັນຊາດລາວໄດ້ ໂດຍການອະນຸຍາດຈາກລັດຖະບານ ແຫ່ງ ສປປ ລາວ.

ການປະສັນຊາດລາວຈະບໍ່ອະນຸຍາດໃນກໍລະນີ ດັ່ງນີ້:

1. ຜູ້ຂໍປະສັນຊາດລາວ ຍັງບໍ່ທັນໄດ້ປະຕິບັດພັນທະພົນລະເມືອງລາວຂອງຕົນຢ່າງຄົບຖ້ວນ ຕໍ່ອົງການຈັດຕັ້ງຂອງລັດ ຫຼື ສັງຄົມ ເຊັ່ນ ການເສຍພາສີ, ອາກອນ ຫຼື ພັນທະອື່ນ;
2. ຜູ້ຂໍປະສັນຊາດລາວເປັນ ຜູ້ຖືກຫາ, ຈຳເລີຍ ຫຼື ຖືກສານຕັດສິນລົງໂທດ ຊຶ່ງຈະໄດ້ປະຕິບັດຄຳຕັດສິນນັ້ນ;
3. ຖ້າວ່າການປະສັນຊາດລາວ ຫາກຂັດກັບຜົນປະໂຫຍດ ຫຼື ຄວາມປອດໄພຂອງ ສປປ ລາວ.

**ມາດຕາ 24 (ປັບປຸງ) ການຖອນສັນຊາດລາວຄືນ**

ພາຍໃນກຳນົດ ຫ້າປີ ນັບແຕ່ວັນໄດ້ຮັບສັນຊາດລາວ ເປັນຕົ້ນໄປ ບຸກຄົນທີ່ໄດ້ສັນຊາດລາວແລ້ວນັ້ນ ອາດຖືກຖອນສັນຊາດລາວຄືນທັນທີ ຕາມການສະເໜີຂອງກະຊວງຍຸຕິທຳ ຖ້າເຫັນວ່າມີການກະທຳ ດັ່ງນີ້:

1. ໄດ້ສັນຊາດລາວມາໂດຍບໍ່ມີພື້ນຖານຖືກຕ້ອງຕາມກົດໝາຍ;
2. ປະພຶດຄືນບໍ່ສົມກຽດສັກສີຂອງພົນລະເມືອງລາວ ເຊັ່ນ ໄດ້ທໍລະຍົດຕໍ່ຊາດ, ໄດ້ກໍ່ຄວາມເສຍຫາຍຕໍ່ປະເທດຊາດ.

ການຖອນສັນຊາດລາວຄືນ ຈະບໍ່ພາໃຫ້ສັນຊາດເດີມຂອງ ຜົວ ຫຼື ເມຍ ແລະ ລູກຂອງຜູ້ກ່ຽວ ມີການປ່ຽນແປງ.

**ມາດຕາ 25 ການໄປຢູ່ຕ່າງປະເທດ**

ບຸກຄົນໃດ ທີ່ໄປຢູ່ຕ່າງປະເທດເກີນ ເຈັດ ປີ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ໄປຢູ່ຕ່າງປະເທດ ໂດຍໄດ້ຮັບອະນຸຍາດແຕ່ຫາກເກີນກຳນົດ ແລະ ບໍ່ໄດ້ຢູ່ໃນການຄຸ້ມຄອງຂອງສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ຂອງ ສປປ ລາວ ປະຈຳປະເທດນັ້ນ ແລະ ຂາດສາຍພົວພັນທາງດ້ານກົດໝາຍກັບລັດ ສປປ ລາວ ເກີນ ສິບ ປີ ກໍຈະເສຍສັນຊາດລາວ.

**ມາດຕາ 26 (ປັບປຸງ) ການໃຫ້ສັນຊາດລາວຄືນ**

ບຸກຄົນທີ່ໄດ້ເສຍສັນຊາດລາວໄປແລ້ວ ອາດໄດ້ສັນຊາດລາວຄືນໃໝ່ຕາມຄຳຮ້ອງຂໍຂອງຜູ້ກ່ຽວ ແລະ ຕາມການຕົກລົງຂອງລັດຖະບານ ແຫ່ງ ສປປ ລາວ.

ຜູ້ຮ້ອງຂໍເອົາສັນຊາດລາວຄືນໃໝ່ ຕ້ອງນຳເອົາຫຼັກຖານມາຢັ້ງຢືນວ່າຕົນເຄີຍມີສັນຊາດລາວມາກ່ອນ.

ບຸກຄົນທີ່ຖືກຖອນສັນຊາດລາວຄືນແລ້ວ ຈະບໍ່ໄດ້ຮັບສັນຊາດລາວຄືນອີກ.

## ໝວດທີ 4
## ສັນຊາດຂອງເດັກໃນກໍລະນີມີການປ່ຽນແປງສັນຊາດຂອງພໍ່ແມ່

**ມາດຕາ 27 ສັນຊາດຂອງເດັກ**

ໃນກໍລະນີ ມີການປ່ຽນແປງສັນຊາດຂອງພໍ່ ແລະ ແມ່ທັງສອງຄື ໄດ້ສັນຊາດລາວ, ປະສັນຊາດລາວ ຫຼື ໄດ້ສັນຊາດລາວຄືນນັ້ນ ສັນຊາດຂອງເດັກທີ່ບໍ່ພົ້ນກະສຽນອາຍຸ ສິບແປດປີ ກໍຈະປ່ຽນແປງໄປນຳສັນຊາດຂອງພໍ່ ແລະ ແມ່ ເວັ້ນເສຍແຕ່ເດັກທີ່ໄດ້ຈົດທະບຽນແຕ່ງດອງໂດຍຖືກຕ້ອງຕາມກົດໝາຍແລ້ວ.

**ມາດຕາ 28 ສັນຊາດຂອງເດັກຊຶ່ງພໍ່ ຫຼື ແມ່ໄດ້ສັນຊາດລາວ**

ຖ້າວ່າພໍ່ ຫຼື ແມ່ ຫາກໄດ້ສັນຊາດລາວແລ້ວ ແຕ່ອີກຜູ້ໜຶ່ງຍັງຖືສັນຊາດອື່ນຢູ່ ເດັກອາດຈະໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງພໍ່ ຫຼື ແມ່ ຜູ້ທີ່ໄດ້ສັນຊາດລາວນັ້ນ. ໃນກໍລະນີ ທີ່ມີການປ່ຽນແປງສັນຊາດຂອງພໍ່ ຫຼື ແມ່ນັ້ນ ເດັກທີ່ເປັນພົນລະເມືອງລາວ ຊຶ່ງມີອາຍຸ ສິບຫ້າປີ ຂຶ້ນໄປ ແຕ່ບໍ່ເຖິງ ສິບແປດປີ ທີ່ໄດ້ຈົດທະບຽນແຕ່ງດອງໂດຍຖືກຕ້ອງຕາມກົດໝາຍແລ້ວ ຈະເລືອກເອົາສັນຊາດຂອງຕົນຕາມສັນຊາດຂອງ ພໍ່ ຫຼື ແມ່ ກໍໄດ້.

ຖ້າວ່າ ພໍ່ ຫຼື ແມ່ ຫາກໄດ້ສັນຊາດລາວແລ້ວ ແຕ່ອີກຜູ້ໜຶ່ງເປັນຄົນບໍ່ມີສັນຊາດ ເດັກທີ່ອາໄສຢູ່ໃນດິນແດນຂອງ ສປປ ລາວ ກໍຈະຖືວ່າເປັນພົນລະເມືອງລາວ.

ຖ້າວ່າ ພໍ່ ຫຼື ແມ່ ຫາກໄດ້ສັນຊາດລາວແລ້ວ ແຕ່ອີກຜູ້ໜຶ່ງເປັນຄົນບໍ່ມີສັນຊາດ ເດັກທີ່ອາໄສຢູ່ນອກດິນແດນຂອງ ສປປ ລາວ ອາດໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງ ພໍ່ ຫຼື ແມ່ ຜູ້ທີ່ໄດ້ສັນຊາດລາວ.

**ມາດຕາ 29 ສັນຊາດຂອງເດັກຊຶ່ງ ພໍ່ ຫຼື ແມ່ ໄດ້ປະສັນຊາດລາວ**

ຖ້າວ່າ ພໍ່ ຫຼື ແມ່ ຫາກໄດ້ປະສັນຊາດລາວ ແຕ່ອີກຜູ້ໜຶ່ງຍັງຮັກສາສັນຊາດລາວຢູ່ ເດັກຈະຕ້ອງຮັກສາສັນຊາດລາວໄວ້.

**ມາດຕາ 30 ສັນຊາດຂອງເດັກທີ່ເອົາມາເປັນລູກລ້ຽງ**

ເດັກທີ່ເປັນພົນລະເມືອງຕ່າງປະເທດ ຫຼື ເດັກທີ່ບໍ່ມີສັນຊາດ ຊຶ່ງພົນລະເມືອງລາວ ໄດ້ເອົາມາເປັນລູກລ້ຽງນັ້ນ ກໍຈະຖືວ່າເປັນພົນລະເມືອງລາວ.

ເດັກທີ່ເປັນພົນລະເມືອງຕ່າງປະເທດ ຫຼື ເດັກທີ່ບໍ່ມີສັນຊາດຊຶ່ງພໍ່ລ້ຽງ ຫຼື ແມ່ລ້ຽງຜູ້ໜຶ່ງເປັນພົນລະເມືອງລາວ ແລະ ອີກຜູ້ໜຶ່ງເປັນພົນລະເມືອງຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ໄດ້ເອົາມາເປັນລູກລ້ຽງນັ້ນ ກໍຈະຖືວ່າເປັນພົນລະເມືອງລາວ ຕາມຄຳເຫັນດີຂອງພໍ່ລ້ຽງ ແລະ ແມ່ລ້ຽງ.

**ມາດຕາ 31 ສັນຊາດຂອງເດັກຊຶ່ງເປັນພົນລະເມືອງລາວທີ່ເອົາໄປເປັນລູກລ້ຽງ**

ເດັກທີ່ເປັນພົນລະເມືອງລາວ ໂດຍແມ່ນພໍ່ລ້ຽງ, ແມ່ລ້ຽງ ຊຶ່ງເປັນພົນລະເມືອງຕ່າງປະເທດ ຫຼື ຜູ້ໜຶ່ງເປັນພົນລະເມືອງລາວ ແລະ ອີກຜູ້ໜຶ່ງເປັນພົນລະເມືອງຕ່າງປະເທດ ໄດ້ເອົາໄປເປັນລູກລ້ຽງນັ້ນ ຈະຮັກສາສັນຊາດລາວໄວ້. ເດັກຜູ້ນັ້ນຈະປະສັນຊາດລາວ ຕາມຄຳຮ້ອງຂໍຂອງພໍ່ລ້ຽງ ແລະ ແມ່ລ້ຽງກໍໄດ້.

ເດັກທີ່ເປັນພົນລະເມືອງລາວ ໂດຍແມ່ນພໍ່ລ້ຽງ, ແມ່ລ້ຽງ ເປັນຄົນບໍ່ມີສັນຊາດ ຫຼື ຜູ້ໜຶ່ງເປັນພົນລະເມືອງລາວ ແລະ ອີກຜູ້ໜຶ່ງເປັນຄົນບໍ່ມີສັນຊາດ ໄດ້ເອົາໄປເປັນລູກລ້ຽງນັ້ນ ກໍຈະຮັກສາສັນຊາດລາວໄວ້.

## ໝວດທີ 5
## ການຕົກລົງ, ການຈົດທະບຽນ ແລະ ການມອບສັນຊາດ

**ມາດຕາ 32 (ປັບປຸງ) ການຕົກລົງກ່ຽວກັບສັນຊາດ**

ການຕົກລົງໃຫ້ສັນຊາດລາວ, ການຖອນສັນຊາດລາວຄືນ, ການໃຫ້ສັນຊາດລາວຄືນ ແລະ ການປະສັນຊາດລາວ ແມ່ນ ລັດຖະບານ ແຫ່ງ ສປປ ລາວ ເປັນຜູ້ຕົກລົງ ຕາມການສະເໜີຂອງກະຊວງຍຸຕິທຳ.

**ມາດຕາ 33 (ໃໝ່) ການຈົດທະບຽນກ່ຽວກັບສັນຊາດ**

ພາຍຫຼັງທີ່ລັດຖະບານໄດ້ຕົກລົງ ກ່ຽວກັບສັນຊາດແລ້ວ ໃຫ້ໄປຈົດທະບຽນຢູ່ກະຊວງພາຍໃນ.

ສຳລັບພົນລະເມືອງລາວຢູ່ຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ປະສັນຊາດລາວແລ້ວນັ້ນ ໃຫ້ໄປຈົດທະບຽນ ຢູ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ຂອງ ສປປ ລາວ ປະຈຳປະເທດນັ້ນ.

**ມາດຕາ 34 (ປັບປຸງ) ການມອບສັນຊາດ**

ອົງການປົກຄອງແຂວງ, ນະຄອນຫຼວງ ເປັນຜູ້ຈັດພິທີມອບສັນຊາດລາວ ຢ່າງເປັນທາງການ ພາຍຫຼັງໄດ້ຈົດທະບຽນປ່ຽນສັນຊາດ ໂດຍການເຂົ້າຮ່ວມ ຂອງຜູ້ຕາງໜ້າພະແນກຍຸຕິທຳ, ພະແນກພົວພັນຮ່ວມມືກັບຕ່າງປະເທດ, ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກພາຍໃນ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນແຂວງ, ນະຄອນຫຼວງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 35 (ໃໝ່) ຂໍ້ຫ້າມສໍາລັບເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານສັນຊາດ**

ຫ້າມເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານສັນຊາດ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ອໍານາດ, ໜ້າທີ່, ຕໍາແໜ່ງເພື່ອຫາຜົນປະໂຫຍດໃຫ້ຕົນ, ຄອບຄົວ ຫຼື ຍາດພີ່ນ້ອງ;
2. ທວງເອົາ, ຂໍເອົາ, ຮັບເອົາ ຫຼື ຕົກລົງຮັບເອົາສິນບົນ;
3. ຖ່ວງດຶງ, ຊຸກເຊື່ອງ ແລະ ທໍາລາຍເອກະສານກ່ຽວກັບວຽກງານສັນຊາດ;
4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 36 (ໃໝ່) ຂໍ້ຫ້າມສໍາລັບຜູ້ຮ້ອງຂໍ**

ຫ້າມ ຜູ້ຮ້ອງຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ ມີພຶດຕິກໍາ ດັ່ງນີ້:

1. ສະໜອງຂໍ້ມູນ ຫຼື ເອກະສານທີ່ບໍ່ຖືກຕ້ອງ ຕາມຄວາມເປັນຈິງ;
2. ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງ, ຕົວະຍົວະ, ຫຼອກລວງ ພະນັກງານທີ່ຮັບຜິດຊອບວຽກງານສັນຊາດ;
3. ໃຫ້ສິນບົນ ແກ່ພະນັກງານທີ່ຮັບຜິດຊອບວຽກງານສັນຊາດ;
4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 37 (ໃໝ່) ຂໍ້ຫ້າມສໍາລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກໍາ ດັ່ງນີ້:

1. ບໍ່ໃຫ້ການຮ່ວມມື, ຂັດຂວາງການປະຕິບັດໜ້າທີ່ ຂອງພະນັກງານທີ່ຮັບຜິດຊອບວຽກງານສັນຊາດ;
2. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ ແກ່ພະນັກງານທີ່ຮັບຜິດຊອບວຽກງານສັນຊາດ;
3. ສົມຮູ້ຮ່ວມຄິດປອມແປງເອກະສານ ຫຼື ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ກ່ຽວກັບວຽກງານສັນຊາດ;
4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 7
## ການຄຸ້ມຄອງວຽກງານສັນຊາດ

**ມາດຕາ 38 (ໃໝ່) ອົງການຄຸ້ມຄອງວຽກງານສັນຊາດ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານສັນຊາດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຍຸຕິທຳ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ, ກະຊວງພາຍໃນ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 39 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງຍຸຕິທຳ**

ໃນການຄຸ້ມຄອງວຽກງານສັນຊາດ ກະຊວງຍຸຕິທຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍກ່ຽວກັບວຽກງານສັນຊາດ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານສັນຊາດ ເປັນລະບຽບການ, ແຜນການ, ໂຄງການອັນລະອຽດ ແລ້ວຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສັນຊາດ;
4. ຄຸ້ມຄອງ, ຊີ້ນຳ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍກ່ຽວກັບວຽກງານສັນຊາດ ໃນຂອບເຂດທົ່ວປະເທດ;
5. ແຕ່ງຕັ້ງຄະນະກຳມະການສຳພາດ;
6. ຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍ ຂອງການຖືສັນຊາດລາວ;
7. ຄົ້ນຄວ້າອອກແບບພິມຄຳຮ້ອງ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສັນຊາດ;
9. ສະເໜີລັດຖະບານ ອອກຂໍ້ຕົກລົງໃຫ້ສັນຊາດລາວ, ປະສັນຊາດລາວ, ໃຫ້ສັນຊາດລາວຄືນ ຫຼື ຖອນສັນຊາດລາວຄືນ;
10. ສະຫຼຸບລາຍງານວຽກງານກ່ຽວກັບສັນຊາດຕໍ່ລັດຖະບານຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 40 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານສັນຊາດ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍກົດໝາຍສະບັບນີ້ ເປັນນິຕິກຳໃຕ້ກົດໝາຍຂອງຂະແໜງການຕົນ ແລະ ຈັດຕັ້ງປະຕິບັດ;
2. ຄົ້ນຄວ້າ ແລະ ມີຄຳເຫັນຢັ້ງຢືນຕໍ່ເອກະສານຂໍເອົາສັນຊາດ, ປະສັນຊາດ ແລະ ເອົາສັນຊາດລາວຄືນ;

3. ຈົດທະບຽນສໍາມະໂນຄົວ, ອອກບັດປະຈໍາຕົວ ພາຍຫຼັງທີ່ລັດຖະບານໄດ້ຕົກລົງ ແລະ ໄດ້ຈົດທະບຽນການປ່ຽນສັນຊາດ;

4. ຕິດຕາມ, ກວດກາຜູ້ທີ່ໄດ້ສັນຊາດລາວ ພາຍໃນເວລາ ຫ້າປີ ຫຼັງຈາກໄດ້ສັນຊາດລາວ;

5. ຄຸ້ມຄອງ, ຊີ້ນໍາ, ຕິດຕາມ ກວດກາ ແລະ ສະຫຼຸບການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍກ່ຽວກັບວຽກງານສັນຊາດ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 41 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ**

ໃນການຄຸ້ມຄອງວຽກງານສັນຊາດ ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍກົດໝາຍສະບັບນີ້ ເປັນນິຕິກໍາໃຕ້ກົດໝາຍຂອງຂະແໜງການຕົນ ແລະ ຈັດຕັ້ງປະຕິບັດ;

2. ຄົ້ນຄວ້າ ແລະ ມີຄໍາເຫັນຢັ້ງຢືນຕໍ່ເອກະສານຂໍເອົາສັນຊາດ, ປະສັນຊາດ ແລະ ເອົາສັນຊາດລາວຄືນ;

3. ຄຸ້ມຄອງ, ຊີ້ນໍາການຈົດທະບຽນການປະສັນຊາດ ຢູ່ຕ່າງປະເທດ;

4. ຄຸ້ມຄອງ, ຊີ້ນໍາ, ຕິດຕາມ ກວດກາ ແລະ ສະຫຼຸບການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍກ່ຽວກັບວຽກງານສັນຊາດ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 42 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງພາຍໃນ**

ໃນການຄຸ້ມຄອງວຽກງານສັນຊາດ ກະຊວງພາຍໃນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍກົດໝາຍສະບັບນີ້ ເປັນນິຕິກໍາໃຕ້ກົດໝາຍຂອງຂະແໜງການຕົນ ແລະ ຈັດຕັ້ງປະຕິບັດ;

2. ຄຸ້ມຄອງວຽກງານຈົດທະບຽນກ່ຽວກັບສັນຊາດ;

3. ຄຸ້ມຄອງ, ຊີ້ນໍາ, ຕິດຕາມ ກວດກາ ແລະ ສະຫຼຸບການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍກ່ຽວກັບວຽກງານສັນຊາດ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 43 (ໃໝ່) ສິດ ແລະ ໜ້າ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ**

ໃນການຄຸ້ມຄອງວຽກງານສັນຊາດ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍກົດໝາຍສະບັບນີ້ ເປັນນິຕິກໍາໃຕ້ກົດໝາຍຂອງຂະແໜງການຕົນ ແລະ ຈັດຕັ້ງປະຕິບັດ;

2. ຄົ້ນຄວ້າຄໍາສະເໜີກ່ຽວກັບການຂໍເອົາສັນຊາດ, ປະສັນຊາດ, ເອົາສັນຊາດລາວຄືນ ແລະ ການຖອນສັນຊາດລາວຄືນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລ້ວນໍາສະເໜີລັດຖະບານພິຈາລະນາ;

3. ອອກແຈ້ງການເຖິງພາກສ່ວນທີ່ກ່ຽວຂ້ອງ ຕາມການຕົກລົງຂອງລັດຖະບານ;

4. ຄຸ້ມຄອງ, ຊີ້ນໍາ, ຕິດຕາມ ກວດກາ ແລະ ສະຫຼຸບການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍກ່ຽວກັບວຽກງານສັນຊາດ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 44 (ໃໝ່) ສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານສັນຊາດ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ກວດກາ ແລະ ຢັ້ງຢືນເອກະສານກ່ຽວກັບສັນຊາດ;
2. ຈັດພິທີມອບສັນຊາດລາວ;
3. ຄຸ້ມຄອງ, ຕິດຕາມ ກວດກາ ແລະ ສະຫຼຸບການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍກ່ຽວກັບວຽກງານສັນຊາດ;
4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 45 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານສັນຊາດ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງການສາທາລະນະສຸກ, ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ມີສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືໃນວຽກງານສັນຊາດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 8
## ການກວດກາວຽກງານສັນຊາດ

**ມາດຕາ 46 (ໃໝ່) ອົງການກວດກາວຽກງານສັນຊາດ**

ອົງການກວດກາວຽກງານສັນຊາດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສັນຊາດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 47 (ໃໝ່) ເນື້ອໃນການກວດກາ**

ການກວດກາວຽກງານສັນຊາດ ມີ ເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍກ່ຽວກັບວຽກງານສັນຊາດ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງວຽກງານສັນຊາດ;
3. ຄວາມຮັບຜິດຊອບຂອງເຈົ້າໜ້າທີ່, ພະນັກງານ-ລັດຖະກອນກ່ຽວກັບວຽກງານສັນຊາດ.

**ມາດຕາ 48 (ໃໝ່) ຮູບການການກວດກາ**

ການກວດກາວຽກງານສັນຊາດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາຢ່າງແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດໂດຍກາຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດໍາເນີນການກວດກາວຽກງານສັນຊາດ ເຈົ້າໜ້າທີ່ຂອງອົງການກວດກາ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 49 (ໃໝ່) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນການໃຫ້ຄວາມຮ່ວມມື, ການລາຍງານ ຫຼື ການສະໜອງຂໍ້ມູນກ່ຽວກັບພຶດຕິກໍາ ຫຼື ການເຄື່ອນໄຫວວຽກງານຕົວຈິງຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 50 (ໃໝ່) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ລົງໂທດທາງອາຍາ ແລ້ວແຕ່ລະກໍລະນີເບົາ ຫຼື ໜັກ ລວມທັງການໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 51 (ປັບປຸງ) ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 52 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.